**MMG LXML Sepon**
MMG House, Bourichanh Road
Sisattanak District, PO Box 4486
Vientiane Capital, Lao PDR
T +856 21 268 200
sepon@mmg.com
**www.mmg.com**

# ປົດອອກຂ່າວ

## ບໍລິສັດ MMG ລ້ານຊ້າງ ມີເນໂຣນສ໌ ລິມິເຕັດ ເຜີຍແຜ່ກ່ຽວກັບ ຄວາມອັນຕະລາຍຂອງລະເບີດບໍ່ທັນແຕກ

03 ມັງກອນ 2018

ໃນວັນທີ 21 ທັນວາ 2017, ພະນັກງານ ແລະ ຜູ້ຮັບເໝົາຂອງ ບໍລິສັດ MMG ລ້ານຊ້າງ ມີເນໂຣນສ໌ ລິມິເຕັດ (LXML) ປະມານ 50 ຄົນ ໄດ້ຮ່ວມແຮງຮ່ວມໃຈກັນ ເຂົ້າຮ່ວມງານວັນເຜີຍແຜ່ ກ່ຽວກັບ ລະເບີດທີ່ບໍ່ທັນແຕກ (unexploded ordinance ຫຼື UXO). ຈຸດປະສົງຂອງງານແມ່ນເພື່ອ ເຜີຍແຜ່ຄວາມຮູ້ກ່ຽວກັບ ຄວາມອັນຕະລາຍຂອງ UXO ແລະ ເພື່ອສະແດງໃຫ້ເຫັນວ່າ ທີມງານ ກວດເກັບກູ້ UXO ທີ່ພຽບພ້ອມໄປດ້ວຍຄຸນວຸທິ ແລະ ທັກສະທີ່ສູງ ໄດ້ ປະກອບສ່ວນເຮັດໃຫ້ ສະຖານທີ່ເຮັດວຽກ ແລະ ຊຸມຊົນອ້ອມຂ້າງບໍ່ຄຳ-ທອງເຊໂປນນັ້ນປອດໄພແນວໃດ. ຖ້າປັດສະຈາກການເກັບກູ້ UXO ແລ້ວ, ແນ່ນອນວ່າ ກິດຈະກຳຂຸດຄົ້ນແຮ່ກໍຈະບໍ່ສາມາດປະຕິບັດໄດ້ຢ່າງປອດໄພທີ່ ບໍ່ຄຳ-ທອງເຊໂປນ.

ສປປ ລາວ ເປັນປະເທດທີ່ຖືກຖິ້ມລະເບີດຢ່າງໜັກໜ່ວງທີ່ສຸດ, ຕໍ່ຫົວຄົນ, ໃນທົ່ວໂລກ. ມີລະເບີດຫຼາຍກວ່າ 260 ລ້ານໜ່ວຍ ທີ່ຖືກຖິ້ມລົງໃສ່ປະເທດລາວ ໃນລະຫວ່າງປີ 1964 ຫາ 1973. ໃນນັ້ນ, ມີລະເບີດປະມານ 80 ລ້ານໜ່ວຍ ທີ່ຍັງບໍ່ທັນແຕກ ແລະ ຍັງເປັນອັນຕະລາຍຍິ່ງຕໍ່ປະເທດ. ລະເບີດທີ່ບໍ່ທັນແຕກຍັງສືບຕໍ່ເຮັດໃຫ້ປະຊາຊົນລາວ ບາດເຈັບ ແລະ ເສຍຊີວິດ ໃນ ສປປ ລາວ.

ພາຍຫຼັງທີ່ບໍ່ຄຳ-ທອງ ເຊໂປນໄດ້ເລີ່ມຕົ້ນການຜະລິດຢ່າງເປັນທາງການ, ບໍລິສັດ ໄດ້ເກັບກູ້ເນື້ອທີ່ປະມານ 7,500 ເຮັກຕາ ແລະ ທຳລາຍລະເບີດທີ່ບໍ່ທັນແຕກໄດ້ປະມານ 58,500 ລູກ. ບໍລິສັດ LXML ຮ່ວມມືກັບ ກະຊວງປ້ອງກັນປະເທດ ເພື່ອຍົກລະດັບຄວາມອາດສາມາດຂອງ ນັກວິຊາການ ລາວ ໃນວຽກງານການກວດກູ້ລະເບີດບໍ່ທັນແຕກໃຫ້ໄດ້ຕາມມາດຕະຖານສາກົນ.

ຜູ້ເຂົ້າຮ່ວມໄດ້ເຮັດກິດຈະກຳຕ່າງໆກ່ຽວກັບການລະບຸຊະນິດ UXO ແລະ ຄວາມອັນຕະລາຍທີ່ກ່ຽວຂ້ອງຕ່າງໆ. ພ້ອມກັນນັ້ນ, ພະນັກງານ ຂອງ LXML ຍັງໄດ້ຮັບທວນຄືນ ກ່ຽວກັບ ລະບົບຫຼັກໝາຍ ເນື້ອທີ່ກວດລະເບີດຕາມ ສີຫຼັກໝາຍ ທີ່ ຈະຊີ້ບອກວ່າ ເຂດໃດໄດ້ມີການເກັບກູ້ລະເບີດແລ້ວ ຫຼື ບໍ່. ຜູ້ເຂົ້າຮ່ວມຍັງໄດ້ ເຫັນວິທີການ ແລະ ອຸປະກອນທີ່ນຳໃຊ້ເຂົ້າໃນການເກັບກູ້ລະເບີດອີກດ້ວຍ. ທ້າຍສຸດ ຜູ້ເຂົ້າຮ່ວມກໍຍັງໄດ້ມີໂອກາດ ເຂົ້າຊີງລາງວັນໃນ ເກມທົດສອບຄວາມຮູ້ ກ່ຽວກັບ ກິດຈະກຳ UXO ຕ່າງໆ ທີ່ໄດ້ຮຽນຮູ້ໃນງານນັ້ນ.

ທີມງານ UXO ຂອງ ບໍລິສັດ LXML ໄດ້ເປັນເຈົ້າການ ຍຶດຖື ແລະ ປະຕິບັດ ອຸດົມການສຳຄັນຂອງບໍລິສັດ ຄື 'ພວກເຮົາຄິດເຖິງຄວາມປອດໄພເປັນສິ່ງທຳອິດ' ຢ່າງສະເໝີຕົ້ນສະເໝີປາຍ ເພາະວຽກງານຂອງພວກເຂົາ ມີຄວາມສ່ຽງຄວາມອັນຕະລາຍທີ່ສະເພາະພິເສດ ແລະ ມີຜົນກະທົບຕໍ່ການດຳເນີນງານໂດຍລວມຂອງບໍລິສັດ ນັບຕັ້ງແຕ່ການຂຸດຄົ້ນບໍ່ແຮ່ຕະຫຼອດເຖິງການປຸງແຕ່ງ-ການຜະລິດເປັນຕົ້ນ. ບໍລິສັດມີແຜນຈັດງານວັນເຜີຍແຜ່ ກ່ຽວກັບ UXO ອີກຄັ້ງໜຶ່ງ ໃນທົກເດືອນຕໍ່ໜ້າ. ຂໍ້ຄວາມຄວາມປອດໄພ

ກ່ຽວກັບ UXO ມີຄວາມສຳຄັນຍິ່ງ ໂດຍສະເພາະເມື່ອພວກເຮົາ ເຜີຍແຜ່ ແລະ ແບ່ງປັນຕໍ່ໃຫ້ກັບຄອບຄົວ ແລະ ໝູ່ເພື່ອນ ກໍຄື ຊຸມຊົນ ເພື່ອໃຫ້ພວກເຂົາຮັບຮູ້ເຖິງ ຄວາມອັນຕະລາຍຂອງ UXO ແລະ ຄຳແນະນຳຈາກຜູ້ຊ່ຽວຊານ-ຊຳນານງານ ທີ່ສາມາດເຂົ້າຫາໄດ້ສະເໝີ.

**(ຈົບ)**



**ພາບ:** ທີມງານ UXO ຂອງ LXML, ພະນັກງານ ແລະ ຜູ້ຮັບເໝົາ ທີ່ງານວັນເຜີຍແຜ່ກ່ຽວກັບ UXO ທີ່ຈັດຂຶ້ນທີ່ ບໍ່ຄຳ-ທອງເຊໂປນ, ເມືອງ ວິລະບູລີ, ແຂວງສະຫວັນນະເຂດ ໃນວັນທີ 21 ທັນວາ 2017.



**ພາບ:** UXO ຈຳນວນໜຶ່ງທີ່ຄົ້ນພົບ-ເກັບກູ້ໄດ້ ທີ່ ບໍ່ຄຳ-ທອງເຊໂປນ.


**ຂໍ້ມູນເພີ່ມເຕີມ**

**ກະລຸນາຕິດຕໍ່ ທ່ານ ສອນປະເສີດ ນີຣັດໃສ,**

**ຫົວໜ້າສື່ສານ ແລະ ປະຊາສຳພັນ.**

ໂທ: 856 21 268 408,

ແຟກສ໌: 856 21 268 001,

ມືຖື: 856 20 2999 6461

ອີ-ເມວ: sonepraseuth.niradsay@mmg.com,

ເວບໄຊທ໌ ທີ່: www.mmg.com